ດຣ. ບຸນລືນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ

ມະຫາວິທະຍາໄລແຫ່ງຊາດ

ເລກທີ 3174 /ມຊ/06

ວັນທີ 21 ກັນຍາ 2006

"Smoke Free National University of Lao"

# ຂໍ້ກຳນົດວ່າດ້ວຍ

# ການສ້າງເຂດປອດຄວັນຢາສູບຂອງມະຫາວິທະຍາໄລແຫ່ງຊາດ

------------

- ອີງຕາມ ກົດໝາຍສະບັບເລກທີ 01/ສພຊ, ລົງວັນທີ 10 ເມສາ 2001,ວ່າດ້ວຍການອະນາໄມ, ກັນພະຍາດ ແລະສົ່ງເສີມສຸຂະພາບ,
- ອີງຕາມ ດຳລັດນາຍົກລັດຖະມົນຕີສະບັບເລກທີ 87/ນຍ, ລົງວັນທີ 20/06/2000 ວ່າດ້ວຍການສ້າງຕັ້ງມະຫາວິທະຍາໄລແຫ່ງຊາດ,
- ອີງຕາມຂໍ້ຕົກລົງຂອງອະທິການບໍດີມະຫາວິທະຍາໄລແຫ່ງຊາດສະບັບເລກທີ 165 ມຊ/2006, ລົງວັນທີ 23/01/2006 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການສ້າງເຂດປອດຄວັນຢາສູບໃນ ມຊ.
- ເຫັນຕາມ ການສະເໜີຂອງຄະນະກຳມະການສ້າງເຂດປອດຄວັນຢາສູບມະຫາວິທະຍາໄລແຫ່ງຊາດ ລົງວັນທີ 05/06/2006

## ອະທິການບໍດີມະຫາວິທະຍາໄລແຫ່ງຊາດຈຶ່ງອອກຂໍ້ກຳນົດດັ່ງນີ້:

<u>ມາດຕາ 1</u>: ໃຫ້ສ້າງຕັ້ງເຂດປອດຄວັນຢາສູບຂຶ້ນໃນທຸກຄະນະວິຊາ, ວິທະຍາໄລ, ຫ້ອງການ, ຫໍສະໝຸດ, ສູນ ແລະພາກສ່ວນຕ່າງໆທີ່ຂຶ້ນກັບມະຫາວິທະຍາໄລແຫ່ງຊາດ.

<u>ມາດຕາ 2</u>: ການສ້າງເຂດປອດຄວັນຢາສູບມີຈຸດປະສົງດັ່ງນີ້:

1. ເພື່ອຈັດລະບຽບກ່ຽວກັບການສູບຢາຢູ່ພາຍໃນມະຫາວິທະຍາໄລແຫ່ງຊາດ.
2. ເພື່ອເຮັດໃຫ້ອັດຕາການສູບຢາຂອງພະນັກງານ, ອາຈານສອນ, ນັກສຶກສາ ແລະບັນດາບຸກຄົນທີ່ມາພົວພັນວຽກງານຢູ່ມະຫາວິທະຍາໄລແຫ່ງຊາດ ລຸດລົງເທື່ອລະກ້າວ.
3. ເພື່ອປ້ອງກັນພະຍາດຕ່າງໆທີ່ເກີດມາຈາກການສູບຢາ ແລະສົ່ງເສີມສຸຂະພາບຂອງຜູ້ທີ່ສູບຢາແລະຜູ້ບໍ່ສູບຢາພາຍໃນມະຫາວິທະຍາໄລແຫ່ງຊາດ

**ມາດຕາ 3**: ການສ້າງເຂດປອດຄວັນຢາສູບມີລະດັບຄາດໝາຍດັ່ງນີ້ :

1. ເຮັດໃຫ້ສະຖານທີ່ທີ່ຂຶ້ນກັບມະຫາວິທະຍາໄລແຫ່ງຊາດປອດຈາກຄວັນຢາສູບ ແລະເຮັດໃຫ້ສະພາບແວດລ້ອມມີຄວາມສະອາດ, ສົດໃສ ແລະສົ່ງເສີມສຸຂະພາບຂອງທຸກຄົນ.
2. ລຸດຜ່ອນໃຫ້ໄດ້ຄ່າໃຊ້ຈ່າຍຂອງພະນັກງານ, ຄູອາຈານ ແລະ ນັກສຶກສາໃນການຊື້ຢາສູບ, ການເສຍຄ່າປິ່ນປົວພະຍາດທີ່ເກີດມາຈາກຄວັນຢາສູບ ແລະເພີ່ມປະສິດທິພາບຂອງວຽກງານການບໍລິຫານ, ການສິດສອນ ແລະ ການສຶກສາຮໍ່າຮຽນໃນທົ່ວມະຫາວິທະຍາໄລ.
3. ເຮັດໃຫ້ມະຫາວິທະຍາໄລແຫ່ງຊາດ ກາຍເປັນແບບຢ່າງທີ່ດີໃຫ້ແກ່ສະຖາບັນການສຶກສາອື່ນໆໃນການສ້າງເຂດປອດຄວັນຢາສູບ.

**ມາດຕາ 4**: ເຂດປອດຄວັນຢາສູບຢູ່ພາຍໃນມະຫາວິທະຍາໄລແຫ່ງຊາດປະກອບ ດ້ວຍບັນດາສະຖານທີ່ ແລະອາຄານຕ່າງໆ ລວມມີ: ຫ້ອງຮຽນ, ຫ້ອງສະໝຸດ, ຫ້ອງປະຊຸມ, ຫ້ອງການ, ຫ້ອງນ້ຳ, ຫ້ອງທົດລອງ, ຫໍພັກ, ຮ້ານອາຫານ, ສະໜາມກິລາໃນຮົ່ມ, ໂຮງໝໍ, ລົດເມຂອງມະຫາວິທະຍາໄລ ແລະສະຖານທີ່ຕ່າງໆ ທີ່ມະຫາວິທະຍາໄລຈັດກິດຈະກຳຢ່າງເປັນທາງການ .

**ມາດຕາ 5**: ບັນດາສະຖານທີ່ເຊິ່ງຖືກກຳນົດໃນມາດຕາ 4 ຕ້ອງຕິດປ້າຍທີ່ຂຽນວ່າ " **ຫ້າມສູບຢາ** " ຫລື " **ຂອບໃຈທີ່ທ່ານບໍ່ສູບຢາ** " ຫລື ຄຳເຕືອນອື່ນໆ ທີ່ມີຄວາມໝາຍຄ້າຍຄືກັນໃສ່ດ້ານທາງເຂົ້າ ແລະພາຍໃນສະຖານທີ່ນັ້ນໆ; ປ້າຍຫລືຄຳເຕືອນນັ້ນຕ້ອງໃຫ້ມີຂະໜາດທີ່ສາມາດອ່ານໄດ້ໃນໄລຍະ 10 ແມັດຂຶ້ນໄປ.

**ມາດຕາ 6**: ທຸກພາກສ່ວນທີ່ຂຶ້ນກັບມະຫາວິທະຍາໄລແຫ່ງຊາດ ຕ້ອງກຳນົດໃຫ້ມີບ່ອນສູບຢາໃສ່ບ່ອນທີ່ເໝາະສົມ; ແຕ່ບ່ອນສູບຢານັ້ນຕ້ອງໃຫ້ຢູ່ຫ່າງອອກຈາກປະຕູຕຶກ ຫຼືອາຄານຢ່າງໜ້ອຍ 20 ແມັດ ແລະມີປ້າຍຂຽນບອກວ່າ " **ບ່ອນສູບຢາ** " ຕິດໄວ້ຢ່າງຊັດເຈນ.

**ມາດຕາ 7**: ສະຖານທີ່ຊຶ່ງຖືກກຳນົດໃຫ້ເປັນບ່ອນສູບຢານັ້ນ ຕ້ອງໃຫ້ມີໂຖ ຫຼື ຖ້ວຍສຳລັບໃສ່ຂີ້ກອກຢາ ພ້ອມທັງມີຖົງຂີ້ເຫຍື້ອສຳລັບຖິ້ມກົດກອກຢາ.

**ມາດຕາ 8**: ພາກສ່ວນຕ່າງໆ ທີ່ຂຶ້ນກັບມະຫາວິທະຍາໄລແຫ່ງຊາດ ຕ້ອງກຳນົດເວລາທີ່ເໝາະສົມໃຫ້ພະນັກງານ ແລະ ນັກສຶກສາຜູ້ທີ່ຍັງສູບຢາອອກໄປສູບຢາຢູ່ບ່ອນທີ່ໄດ້ກຳນົດໄວ້.

ມາດຕາ 9: ເພື່ອນຳພາການຈັດຕັ້ງປະຕິບັດ ແລະ ປະເມີນຜົນການປະຕິບັດເຂດປອດຄວັນຢາສູບໃຫ້ມີປະສິດທິຜົນ, ໃຫ້ມີຄະນະປະສານງານລະຫວ່າງຄະນະຕ່າງໆ ພາຍໃນມະຫາວິທະຍາໄລແຫ່ງຊາດ ເຊິ່ງປະກອບດ້ວຍ :

| | | |
|---|---|---|
| 1. ຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດ | ເປັນ | ປະທານ |
| 2. ຮອງຄະນະບໍດີຄະນະວິທະຍາສາດການແພດ | ເປັນ | ຮອງປະທານ |
| 3. ບັນດາທ່ານຮອງຄະນະບໍດີຈາກທຸກຄະນະວິຊາຕ່າງໆ | ເປັນ | ກຳມະການ |
| 4. ຮອງຜູ້ອຳນວຍການວິທະຍາໄລວິທະຍາສາດພື້ນຖານ | ເປັນ | ກຳມະການ |
| 5. ຮອງຜູ້ອຳນວຍການຫໍສະໝຸດ ແລະສູນຕ່າງໆ | ເປັນ | ກຳມະການ |
| 6. ເລຂາ/ປະທານ 3 ອົງການຈັດຕັ້ງມະຫາຊົນຂັ້ນ ມຊ. | ເປັນ | ກຳມະການ |
| 7. ຮອງຜູ້ອຳນວຍການໂຮງໝໍເຊດຖາທິຣາດ | ເປັນ | ກຳມະການ |
| 8. ອາຈານ 1 ທ່ານ ຈາກຄະນະວິທະຍາສາດການແພດ | ເປັນ | ກຳມະການແລະເລຂາ |

ມາດຕາ 10: ຄະນະປະສານງານກ່ຽວກັບການສົ່ງເສີມເຂດປອດຄວັນຢາສູບມີໜ້າທີ່ດັ່ງນີ້ :

1. ຈັດຕັ້ງເຜີຍແຜ່ຂໍ້ຕົກລົງສະບັບນີ້ໃນທົ່ວມະຫາວິທະຍາໄລແຫ່ງຊາດ.
2. ຈັດຕັ້ງຄະນະຮັບຜິດຊອບກ່ຽວກັບເຂດປອດຄວັນຢາສູບຢູ່ໃນແຕ່ລະພາກສ່ວນ.
3. ຈັດຕັ້ງກິດຈະກຳຕ່າງໆເພື່ອສົ່ງເສີມເຂດປອດຄວັນຢາສູບໃຫ້ເປັນຂະບວນກວ້າງຂວາງ.
4. ສະຫລຸບແລະລາຍງານຜົນການຈັດຕັ້ງປະຕິບັດວຽກງານເຂດປອດຄວັນຢາສູບໃຫ້ຂັ້ນເທິງຊາບ ໃນແຕ່ລະໄລຍະ.
5. ສົມທົບກັບຄະນະປະສານງານການຄວບຄຸມຢາສູບຂອງກະຊວງສາທາລະນະສຸກ ແລະ ບັນດາອົງການຈັດຕັ້ງຕ່າງໆທັງພາຍໃນ ແລະຕ່າງປະເທດ ເພື່ອຊຸກຍູ້ວຽກງານເຂດປອດຄວັນຢາສູບໃຫ້ເຕີບໃຫຍ່ຂະຫຍາຍຕົວຂຶ້ນເລື້ອຍໆ.

ມາດຕາ 11: ບັນດາຂໍ້ຫ້າມຕ່າງໆກ່ຽວກັບການສູບຢາໃນມະຫາວິທະຍາໄລແຫ່ງຊາດ

1. ຫ້າມສູບຢາໃນສະຖານທີ່ຊຶ່ງກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ .
2. ຫ້າມຂາຍຢາສູບພາຍໃນຂອບເຂດການຄຸ້ມຄອງຂອງມະຫາວິທະຍາໄລແຫ່ງຊາດ.
3. ຫ້າມຮັບເອົາການຊ່ວຍເຫຼືອຈາກບໍລິສັດ, ຕົວແທນຈຳໜ່າຍ ຫຼືອຸດສາຫະກຳຢາສູບ.
4. ຫ້າມນຳໃຊ້ສະຖານຕ່າງໆຂອງມະຫາວິທະຍາໄລແຫ່ງຊາດ ເປັນບ່ອນໂຄສະນາ ຫຼື ສົ່ງເສີມການຂາຍຢາສູບບໍ່ວ່າໂດຍທາງກົງ ຫຼືທາງອ້ອມກໍຕາມ.

ມາດຕາ 12: ພາກສ່ວນ ຫຼື ບຸກຄົນໃດຫາກປະຕິບັດຂໍ້ຕົກລົງສະບັບນີ້ຢ່າງມີປະສິດທິຜົນຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມຈາກການຈັດຕັ້ງທີ່ກ່ຽວຂ້ອງຂອງມະຫາວິທະຍາໄລ.

ມາດຕາ 13: ພາກສ່ວນ ຫຼືບຸກຄົນໃດຫາກລະເມີດຕໍ່ຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ຕຳໜິສິ່ງຂ່າວແລະກ້າວໄປເຖິງຖືກປະຕິບັດວິໄນຢ່າງເໝາະສົມຈາກການຈັດຕັ້ງທີ່ກ່ຽວຂ້ອງຂອງມະຫາວິທະຍາໄລແຫ່ງຊາດ.

ມາດຕາ 14: ໃຫ້ຄະນະວິຊາ, ວິທະຍາໄລ, ຫ້ອງການ, ສູນ, ຫໍສະໝຸດ ແລະພາກສ່ວນຕ່າງໆທີ່ຂຶ້ນກັບມະຫາວິທະຍາໄລແຫ່ງຊາດພັນຂະຫຍາຍ ແລະຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 15: ຂໍ້ກຳນົດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ອະທິການບໍດີ

ຮສ ສຸກກິ່ງແສງ ໄຊຍະເລີດ